**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1355 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 04 ຕຸລາ 2022

# ຂໍ້ຕົກລົງ
# ວ່າດ້ວຍ ກຸ່ມ ແລະ ສະຫະກອນ ຫັດຖະກຳ

- ອີງຕາມ ກົດໝາຍວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ສະບັບເລກທີ 606/ລບ, ລົງວັນທີ 26 ພະຈິກ 2020;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 01568/ກອຫ.ຫຖກ ລົງວັນທີ 08 ກັນຍາ 2022.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ ແລະ ລະບຽບການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ກຸ່ມ ແລະ ສະຫະກອນຫັດຖະກຳ ເພື່ອຊຸກຍູ້ ສົ່ງເສີມ ແລະ ພັດທະນາການຜະລິດ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ ແນໃສ່ແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າໃຫ້ດີຂຶ້ນ ທັງເປັນການອະນຸລັກມູນເຊື້ອ, ສີໄມ້ລາຍມື ທີ່ມີຄຸນຄ່າທາງດ້ານສິລະປະ ວັດທະນະທຳ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ກຸ່ມ ແລະ ສະຫະກອນ ຫັດຖະກຳ**

ກຸ່ມຫັດຖະກຳ ແມ່ນການຈັດຕັ້ງລວມໝູ່ຂອງປະຊາຊົນລາວ ທີ່ປະກອບອາຊີບໃນຂະແໜງວິຊາຊີບຫັດຖະກຳ ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ລະຫວ່າງ ສະມາຊິກ ແລະ ຄອບຄົວສະມາຊິກດ້ວຍກັນ ທາງດ້ານປະສົບການ, ການຖ່າຍທອດສີມືຊ່າງ ແລະ ການຜະລິດຫັດຖະກຳ.

ສະຫະກອນຫັດຖະກຳ ແມ່ນການຈັດຕັ້ງທຸລະກິດລວມໝູ່ ຂອງຜູ້ປະກອບອາຊີບໃນຂະແໜງວິຊາຊີບຫັດຖະກຳ ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ທາງດ້ານທຶນ, ປະສົບການ ແລະ ເຕັກນິກ ໃນການດຳເນີນທຸລະກິດ ການຜະລິດຫັດຖະກຳເປັນສິນຄ້າ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຫັດຖະກຳ ໝາຍເຖິງ ຂະບວນການຜະລິດ ຂອງຂະແໜງເສດຖະກິດໜຶ່ງ ຊຶ່ງນຳໃຊ້ແຮງງານທີ່ມີຄວາມຊຳນານງານ ແລະ ພູມປັນຍາ ຂອງຄົນເປັນຕົ້ນຕໍ ເພື່ອສ້າງເປັນຜະລິດຕະພັນທີ່ມີຄວາມປານີດງົດງາມ, ມີຄຸນຄ່າສູງທາງດ້ານສິລະປະວັດທະນະທຳ, ເສດຖະກິດ ແລະ ມີເອກະລັກສະເພາະຕົວ;

2. ໃບອະນຸຍາດສ້າງຕັ້ງກຸ່ມຫັດຖະກຳ ໝາຍເຖິງ ເອກະສານການອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນການເຄື່ອນໄຫວ ຂອງກຸ່ມຫັດຖະກຳ;

3. ໃບອະນຸຍາດສ້າງຕັ້ງສະຫະກອນຫັດຖະກຳ ໝາຍເຖິງ ເອກະສານການອະນຸຍາດໃຫ້ສ້າງຕັ້ງ ແລະ ດຳເນີນກິດຈະການສະຫະກອນຫັດຖະກຳ;

4. ຄະນະບໍລິຫານ ໝາຍເຖິງ ບຸກຄົນທີ່ເປັນຕົວແທນຂອງສະມາຊິກຂອງ ກຸ່ມ ຫຼື ສະຫະກອນ ຫັດຖະກຳ ທີ່ໄດ້ຮັບເລືອກຕັ້ງຈາກກອງປະຊຸມສະມາຊິກ ໃຫ້ດຳລົງຕຳແໜ່ງ ເປັນຄະນະບໍລິຫານ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ຢູ່ ສປປ ລາວ.

## ໝວດທີ 2
## ຂະແໜງວິຊາຊີບຫັດຖະກຳຂອງ ກຸ່ມ ແລະ ສະຫະກອນ ຫັດຖະກຳ

**ມາດຕາ 5 ຂະແໜງວິຊາຊີບຂອງ ກຸ່ມ ແລະ ສະຫະກອນ ຫັດຖະກຳ**

ກຸ່ມ ແລະ ສະຫະກອນ ຫັດຖະກຳ ສາມາດເຄື່ອນໄຫວ ໃນໜຶ່ງ ຫຼື ຫຼາຍ ຂະແໜງວິຊາຊີບຫັດຖະກຳ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ;
2. ຂະແໜງໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້;
3. ຂະແໜງເຈ້ຍພື້ນເມືອງ;
4. ຂະແໜງສິລະປະໂລຫະ ແລະ ອະໂລຫະ;
5. ຂະແໜງປັ້ນດິນເຜົາ;
6. ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ;
7. ຂະແໜງອາຫານ ແລະ ເຄື່ອງດື່ມພື້ນເມືອງ.

**ມາດຕາ 6 ກິດຈະກຳຍ່ອຍຂອງການຜະລິດຫັດຖະກຳ**

ກິດຈະກຳຍ່ອຍຂອງການຜະລິດຫັດຖະກຳ ທີ່ເປັນບູລິມະສິດ ຕົ້ນຕໍມີ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ ປະກອບມີ: ການຕ່ຳຫູກ, ການຍ້ອມສີທຳມະຊາດ, ການຫຍິບ, ການປັກ, ການທັກ, ການແຊ່ວ, ດອກດວງ, ມັດມີ່, ການອອກແບບ, ການເຂັນຝ້າຍ, ການປູກມອນ, ການລ້ຽງມ້ອນ, ການສາວໄໝ ແລະ ອື່ນໆ;

2. ຂະແໜງໄມ້, ຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ ປະກອບມີ: ການຈັກສານ, ການຄວັດ, ການແກະສະຫຼັກ ແລະ ອື່ນໆ;

3. ຂະແໜງເຈ້ຍພື້ນເມືອງ ປະກອບມີ: ການຜະລິດເຈ້ຍສາ, ການຜະລິດເຈ້ຍເຟືອງ, ການຜະລິດເຈ້ຍຈາກໄມ້ປ່ອງ ແລະ ອື່ນໆ;

4. ຂະແໜງສິລະປະໂລຫະ ແລະ ອະໂລຫະ ປະກອບມີ: ການຫຼອມ, ການຫຼໍ່, ການຄວັດ, ການແກະສະລັກງາ, ເຂົາສັດ ແລະ ອື່ນໆ;

5. ຂະແໜງປັ້ນດິນເຜົາ ປະກອບມີ: ການປັ້ນດິນເຜົາ, ການຜະລິດດິນຈີ່, ດິນຂໍ ແລະ ອື່ນໆ;

6. ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ ປະກອບມີ: ການຕີເງິນ, ຄຳ, ທອງ ທີ່ເປັນລວດລາຍສິລະປະພື້ນເມືອງລາວ, ການຕີງ້າວ, ດາບ ແລະ ອື່ນໆ;

7. ຂະແໜງອາຫານ ແລະ ເຄື່ອງດື່ມພື້ນເມືອງ ປະກອບມີ: ການຜະລິດແຈ່ວບອງ, ການຜະລິດໄຄແຜ່ນ, ການຜະລິດເຄື່ອງດື່ມພື້ນເມືອງ ແລະ ອື່ນໆ.

## ໝວດທີ 3
## ການສ້າງຕັ້ງ ກຸ່ມຫັດຖະກຳ

### ມາດຕາ 7 ຂະໜາດຂອງກຸ່ມຫັດຖະກຳ

ກຸ່ມຫັດຖະກຳ ແບ່ງອອກເປັນ ສາມ ຂະໜາດ ຄື:

1. ຂະໜາດນ້ອຍ ມີສະມາຊິກ ແຕ່ 5-10 ຄົນ;
2. ຂະໜາດກາງ ມີສະມາຊິກ ແຕ່ 11-25 ຄົນ;
3. ຂະໜາດໃຫຍ່ ມີສະມາຊິກ ແຕ່ 26 ຄົນຂຶ້ນໄປ.

### ມາດຕາ 8 ເງື່ອນໄຂການສ້າງຕັ້ງກຸ່ມຫັດຖະກຳ

ການສ້າງຕັ້ງກຸ່ມຫັດຖະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສະມາຊິກຂອງກຸ່ມ ຢ່າງໜ້ອຍ ຫ້າ ຄົນ ຊຶ່ງເປັນພົນລະເມືອງລາວ ທີ່ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;

2. ໃນກໍລະນີມີສະມາຊິກ ສິບ ຄົນ ຂຶ້ນໄປ ຕ້ອງມີສະຖານທີ່ເຮັດວຽກຂອງກຸ່ມ;

3. ມີສະມາຊິກຢ່າງໜ້ອຍ ໜຶ່ງ ຄົນ ມີປະສົບການເຮັດວຽກກ່ຽວກັບຫັດຖະກຳ ສອງ ປີ ຂຶ້ນໄປ;

4. ມີສະຖານທີ່ທຳການຜະລິດ ແລະ ສິ່ງອຳນວຍຄວາມສະດວກອື່ນຢ່າງເໝາະສົມ ຕາມເງື່ອນໄຂການຜະລິດຕົວຈິງ.

### ມາດຕາ 9 ກອງປະຊຸມສ້າງຕັ້ງກຸ່ມຫັດຖະກຳ

ສະມາຊິກ ທີ່ມີຈຸດປະສົງສ້າງຕັ້ງກຸ່ມຫັດຖະກຳ ຕ້ອງໄດ້ຈັດກອງປະຊຸມສ້າງຕັ້ງ ເພື່ອປຶກສາຫາລື ແລະ ກະກຽມການສ້າງຕັ້ງກຸ່ມ ຊຶ່ງປະກອບມີເນື້ອໃນ ດັ່ງນີ້:

1. ສ້າງຄວາມຮັບຮູ້ ກ່ຽວກັບການສ້າງຕັ້ງກຸ່ມ;

2. ປຶກສາຫາລື ກ່ຽວກັບການສ້າງຕັ້ງ ເປັນຕົ້ນ: ເລືອກຂະແໜງວິຊາຊີບຫັດຖະກຳ, ຊື່ກຸ່ມ, ຈຳນວນສະມາຊິກ, ສະຖານທີ່ທຳການຜະລິດ, ຜະລິດຕະພັນທີ່ຈະຜະລິດ ແລະ ແຜນການສ້າງຕັ້ງ;

3. ພິຈາລະນາຮັບຮອງ ແຜນການດຳເນີນງານ ແລະ ກົດລະບຽບ;

4. ເລືອກຕັ້ງຄະນະບໍລິຫານກຸ່ມ.

**ມາດຕາ 10 ກົດລະບຽບຂອງກຸ່ມຫັດຖະກຳ**

ກົດລະບຽບຂອງກຸ່ມຫັດຖະກຳ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນພື້ນຖານຂອງກຸ່ມຫັດຖະກຳ ເປັນຕົ້ນ ຊື່, ຈຳນວນສະມາຊິກ, ເບີຕິດຕໍ່, ສະຖານທີ່ຕັ້ງຫ້ອງການ ແລະ/ຫຼື ສະຖານທີ່ທຳການຜະລິດ;
2. ວັດຖຸປະສົງຂອງກຸ່ມ;
3. ໂຄງປະກອບການຈັດຕັ້ງ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ;
4. ການພົວພັນພາຍໃນ ແລະ ພາຍນອກ ຂອງກຸ່ມ ແລະ ສະມາຊິກ;
5. ເງື່ອນໄຂ ແລະ ຂັ້ນຕອນການຮັບສະມາຊິກກຸ່ມ ແລະ ການສິ້ນສຸດເປັນສະມາຊິກ;
6. ເງື່ອນໄຂ ແລະ ຂັ້ນຕອນການເລືອກຕັ້ງ ແລະ ປົດຕຳແໜ່ງຄະນະບໍລິຫານກຸ່ມ;
7. ສິດ ແລະ ພັນທະ ຂອງຄະນະບໍລິຫານກຸ່ມ, ສະມາຊິກກຸ່ມ ຕາມທີ່ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ;
8. ການດຳເນີນກອງປະຊຸມຂອງກຸ່ມ.

**ມາດຕາ 11 ການສະເໜີສ້າງຕັ້ງກຸ່ມຫັດຖະກຳ**

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງກຸ່ມຫັດຖະກຳ ໃຫ້ປະກອບເອກະສານສະເໜີຕໍ່ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງ ກົມອຸດສາຫະກຳ ແລະ ຫັດຖະກຳ;
2. ບັນຊີລາຍຊື່ຂອງສະມາຊິກຂອງກຸ່ມ ແລະ ຊີວະປະຫວັດຄະນະບໍລິຫານກຸ່ມ;
3. ບົດບັນທຶກກອງປະຊຸມສ້າງຕັ້ງກຸ່ມ;
4. ກົດລະບຽບຂອງກຸ່ມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
5. ແຜນດຳເນີນງານຂອງກຸ່ມ.

**ມາດຕາ 12 ການພິຈາລະນາອະນຸຍາດສ້າງຕັ້ງກຸ່ມຫັດຖະກຳ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕ້ອງຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດສ້າງຕັ້ງກຸ່ມຫັດຖະກຳ ພາຍໃນເວລາ ສາມ ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ, ແລ້ວນຳສົ່ງສຳເນົາໃບອະນຸຍາດສ້າງຕັ້ງກຸ່ມໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ເພື່ອຊາບ ແລະ ຂຶ້ນບັນຊີກຸ່ມ.

ກໍລະນີ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີປະຕິເສດຄຳສະເໜີ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມທັງເຫດຜົນ ພາຍໃນເວລາ ສາມ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ.

**ມາດຕາ 13 ອາຍຸໃບອະນຸຍາດສ້າງກຸ່ມຫັດຖະກຳ**

ໃບອະນຸຍາດສ້າງຕັ້ງກຸ່ມຫັດຖະກຳ ມີອາຍຸການນຳໃຊ້ ຕະຫຼອດໄລຍະການດຳເນີນກິດຈະການຂອງກຸ່ມ ແລະ ຈະໄດ້ມີການປະເມີນຄືນການເຄື່ອນໄຫວຂອງກຸ່ມ ທຸກໆ ສອງ ປີ.

**ມາດຕາ 14 ການປະເມີນການເຄື່ອນໄຫວຂອງກຸ່ມຫັດຖະກຳ**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ເປັນເຈົ້າການໃນການລົງກວດກາ ແລະ ປະເມີນການເຄື່ອນໄຫວຂອງກຸ່ມຫັດຖະກຳ ຕາມເງື່ອນໄຂ ແລະ ການອະນຸຍາດສ້າງຕັ້ງກຸ່ມ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້. ການລົງກວດກາ ແລະ ປະເມີນແຕ່ລະຄັ້ງຕ້ອງເຮັດບົດບັນທຶກໄວ້ເປັນຫຼັກຖານ.

ຜ່ານການລົງກວດກາ ແລະ ປະເມີນ ຫາກເຫັນວ່າ ກຸ່ມຫັດຖະກຳ ປະຕິບັດບໍ່ໄດ້ຕາມເງື່ອນໄຂ ຫຼື ເຄື່ອນໄຫວ ບໍ່ສອດຄ່ອງກັບການອະນຸຍາດ ຕ້ອງແນະນຳໃຫ້ກຸ່ມຫັດຖະກຳ ປັບປຸງໃຫ້ໄດ້ຕາມເງື່ອນໄຂ ຫຼື ເຄື່ອນໄຫວໃຫ້ຖືກຕ້ອງຕາມໃບອະນຸຍາດ. ກໍລະນີບໍ່ມີການປັບປຸງ ພາຍໃນໄລຍະເວລາທີ່ກຳນົດໃນບົດບັນທຶກ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ສາມາດພິຈາລະນາ ໂຈະໃບອະນຸຍາດສ້າງຕັ້ງ ຫຼື ຍຸບເລີກກຸ່ມຫັດຖະກຳ ດັ່ງກ່າວ.

**ມາດຕາ 15 ສິດ ແລະ ພັນທະ ຂອງກຸ່ມຫັດຖະກຳ**

ກຸ່ມຫັດຖະກຳ ຕ້ອງປະຕິບັດຕາມສິດ ແລະ ພັນທະຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ແລະ ກົດລະບຽບຂອງກຸ່ມ.

**ມາດຕາ 16 ການໂຮມກຸ່ມ, ການແຍກ ແລະ ການຍຸບເລີກ**

ການໂຮມກຸ່ມ, ການແຍກ ແລະ ການຍຸບເລີກ ຂອງກຸ່ມຫັດຖະກຳ ໃຫ້ປະຕິບັດຕາມຫຼັກການ ທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ.

ກຸ່ມຫັດຖະກຳ ທີ່ມີຈຸດປະສົງ ໂຮມ, ແຍກ ຫຼື ຍຸບເລີກ ດ້ວຍຄວາມສະໝັກໃຈ ໃຫ້ຍື່ນໜັງສືສະເໜີ ແລະ ເອກະສານກ່ຽວຂ້ອງ ເປັນຕົ້ນ ມະຕິກອງປະຊຸມກຸ່ມ ແລະ ໃບອະນຸຍາດສ້າງຕັ້ງກຸ່ມ ເຖິງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອຄົ້ນຄວ້າພິຈາລະນາ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ພາຍຫຼັງການໂຮມ, ການແຍກ ຫຼື ການຍຸບເລີກ ກຸ່ມຫັດຖະກຳ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແຈ້ງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ເພື່ອຊາບ ແລະ ປັບປຸງບັນຊີກຸ່ມ.

## ໝວດທີ 4
## ການສ້າງຕັ້ງສະຫະກອນຫັດຖະກຳ

**ມາດຕາ 17 ເງື່ອນໄຂການສ້າງຕັ້ງສະຫະກອນຫັດຖະກຳ**

ການສ້າງຕັ້ງສະຫະກອນຫັດຖະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສະມາຊິກຢ່າງໜ້ອຍ ເຈັດ ຄົນ ຊຶ່ງເປັນພົນລະເມືອງລາວ ທີ່ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;

2. ມີກົດລະບຽບ, ຫ້ອງການ, ທຶນ ແລະ ຊັບສິນ ເພື່ອຮັບປະກັນ ໃຫ້ແກ່ການເຄື່ອນໄຫວຂອງສະຫະກອນ;

3. ມີສະມາຊິກ ຢ່າງໜ້ອຍ ໜຶ່ງ ຄົນ ທີ່ຜ່ານການຝຶກອົບຮົມ ຫຼື ຜ່ານຫຼັກສູດໃດໜຶ່ງ ກ່ຽວກັບວຽກງານສະຫະກອນ;

4. ມີສະຖານທີ່ຜະລິດ ທີ່ເໝາະສົມຕາມເງື່ອນໄຂການຜະລິດຕົວຈິງ ແລະ ບໍ່ສ້າງຜົນກະທົບຕໍ່ຊຸມຊົນ.

ສຳລັບກຸ່ມຫັດຖະກຳ ທີ່ມີຈຸດປະສົງສ້າງຕັ້ງເປັນສະຫະກອນຫັດຖະກຳ ຖ້າຫາກມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້ ສາມາດສະເໜີສ້າງຕັ້ງເປັນສະຫະກອນຫັດຖະກຳ ຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 18 ກອງປະຊຸມສ້າງຕັ້ງສະຫະກອນຫັດຖະກຳ**

ສະມາຊິກ ທີ່ມີຈຸດປະສົງສ້າງຕັ້ງສະຫະກອນຫັດຖະກຳ ຕ້ອງໄດ້ຈັດກອງປະຊຸມສ້າງຕັ້ງ ເພື່ອປຶກສາຫາລື ແລະ ກະກຽມການສ້າງຕັ້ງສະຫະກອນຫັດຖະກຳ ຊຶ່ງປະກອບມີເນື້ອໃນ ດັ່ງນີ້:

1. ສ້າງຄວາມຮັບຮູ້ ກ່ຽວກັບການສ້າງຕັ້ງສະຫະກອນຫັດຖະກຳ;

2. ປຶກສາຫາລື ກ່ຽວກັບການສ້າງຕັ້ງ ເປັນຕົ້ນ: ເລືອກຂະແໜງວິຊາຊີບຫັດຖະກຳ, ຊື່ສະຫະກອນຫັດຖະກຳ, ຈຳນວນສະມາຊິກ, ສະຖານທີ່ຕັ້ງ, ສະຖານທີ່ຜະລິດ, ຜະລິດຕະພັນທີ່ຈະຜະລິດ ແລະ ຈຳໜ່າຍ;

3. ພິຈາລະນາຮັບຮອງ ແຜນດຳເນີນງານ ແລະ ກົດລະບຽບ;

4. ເລືອກຕັ້ງຄະນະບໍລິຫານສະຫະກອນ.

## ມາດຕາ 19 ກົດລະບຽບຂອງສະຫະກອນຫັດຖະກຳ

ກົດລະບຽບຂອງສະຫະກອນຫັດຖະກຳ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຂໍ້ມູນພື້ນຖານຂອງສະຫະກອນ ເປັນຕົ້ນ ຊື່, ຈຳນວນສະມາຊິກ, ເບີຕິດຕໍ່, ສະຖານທີ່ຕັ້ງຫ້ອງການ ແລະ/ຫຼື ສະຖານທີ່ທຳການຜະລິດ;

2. ວັດຖຸປະສົງ ຂອງສະຫະກອນ;

3. ທຶນຈົດທະບຽນ, ຈຳນວນຮຸ້ນ, ມູນຄ່າຂອງຮຸ້ນ, ການຊຳລະຄ່າຮຸ້ນດ້ວຍເງິນ ຫຼື ຊັບສິນອື່ນ, ການຂາຍ, ການໂອນຮຸ້ນ ແລະ ການຈ່າຍຄືນຄ່າຮຸ້ນ;

4. ໂຄງປະກອບການຈັດຕັ້ງຂອງສະຫະກອນຫັດຖະກຳ;

5. ເງື່ອນໄຂ ແລະ ຂັ້ນຕອນການຮັບສະມາຊິກສະຫະກອນ ແລະ ການສິ້ນສຸດເປັນສະມາຊິກ;

6. ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານສະຫະກອນ, ສິດ ແລະ ພັນທະ ຂອງສະມາຊິກສະຫະກອນ;

7. ການຄຸ້ມຄອງບັນຊີ, ຊັບສິນບັດ ແລະ ການໃນການແບ່ງປັນຜົນປະໂຫຍດ ຂອງສະຫະກອນ;

8. ການດຳເນີນກອງປະຊຸມຂອງສະຫະກອນ;

9. ຈຳນວນກຳມະການບໍລິຫານ, ວິທີຄັດເລືອກ, ຄວາມຮັບຜິດຊອບ, ການພົ້ນຈາກຕຳແໜ່ງ ແລະການປະຊຸມ;

10. ການພົວພັນພາຍໃນ ແລະ ພາຍນອກ ຂອງສະມາຊິກ ແລະ ສະຫະກອນ;

11. ການສ້າງຕັ້ງສາຂາ, ການຍຸບເລີກ ແລະ ວິທີການຊຳລະສະສາງ.

## ມາດຕາ 20 ການສະເໜີສ້າງຕັ້ງສະຫະກອນຫັດຖະກຳ

ຜູ້ທີ່ມີຈຸດປະສົງ ສ້າງຕັ້ງສະຫະກອນຫັດຖະກຳ ໃຫ້ປະກອບເອກະສານສະເໜີ ຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງ ກົມອຸດສາຫະກຳ ແລະ ຫັດຖະກຳ;

2. ແຜນການດຳເນີນງານ ຂອງສະຫະກອນຫັດຖະກຳ;

3. ບັນຊີລາຍຊື່ສະມາຊິກ, ຈຳນວນຮຸ້ນ ແລະ ທຶນຈົດທະບຽນຂອງສະຫະກອນ;

4. ບົດວິພາກເສດຖະກິດ-ເຕັກນິກຂອງສະຫະກອນ ຕາມແບບພິມຂອງ ກົມອຸດສາຫະກຳ ແລະຫັດຖະກຳ;

5. ລະບຽບສະຫະກອນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້;

6. ໃບອະນຸຍາດສ້າງຕັ້ງກຸ່ມ ກໍລະນີກຸ່ມຫັດຖະກຳເປັນຜູ້ສະເໜີ.

## ມາດຕາ 21 ການພິຈາລະນາອະນຸຍາດສ້າງຕັ້ງສະຫະກອນຫັດຖະກຳ

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ການຜະລິດ ແລະ ເຮັດບົດ

ບັນທຶກຜົນການກວດກາ. ກໍລະນີຫາກເຫັນວ່າຄົບເງື່ອນໄຂ ຕ້ອງພິຈາລະນາອອກໃບອະນຸຍາດສ້າງຕັ້ງສະຫະກອນຫັດຖະກຳ ພາຍໃນເວລາ ຫ້າ ວັນລັດຖະການ.

ກໍລະນີ ເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ກໍລະນີ ບໍ່ສາມາດອອກໃບອະນຸຍາດສ້າງຕັ້ງສະຫະກອນຫັດຖະກຳ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ສະເໜີຊາບ ພາຍໃນເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 22 ການແຈ້ງຂຶ້ນທະບຽນສະຫະກອນຫັດຖະກຳ**

ຜູ້ສະເໜີສ້າງຕັ້ງສະຫະກອນຫັດຖະກຳ ຕ້ອງແຈ້ງຂຶ້ນທະບຽນສະຫະກອນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຢູ່ຫ້ອງການການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ພາຍໃນ ສິບຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບໃບອະນຸຍາດສ້າງຕັ້ງສະຫະກອນຫັດຖະກຳ ເປັນຕົ້ນໄປ.

**ມາດຕາ 23 ສາຂາສະຫະກອນຫັດຖະກຳ**

ສະຫະກອນຫັດຖະກຳ ສາມາດສ້າງຕັ້ງສາຂາຂອງຕົນ ແຕ່ຕ້ອງຂໍອະນຸຍາດຈາກຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ບ່ອນທີ່ຈະຕັ້ງສາຂາ ເພື່ອຄົ້ນຄວ້າພິຈາລະນາ ສະຖານທີ່ຜະລິດ ຂອງສະຫະກອນຫັດຖະກຳ ທີ່ເໝາະສົມຕາມເງື່ອນໄຂການຜະລິດຕົວຈິງ ແລະ ບໍ່ສ້າງຜົນກະທົບຕໍ່ຊຸມຊົນ.

ພາຍຫຼັງອອກໃບຢັ້ງຢືນສ້າງຕັ້ງສາຂາສະຫະກອນຫັດຖະກຳ ໃຫ້ສະຫະກອນດັ່ງກ່າວສະເໜີດັດແກ້ໃບທະບຽນສະຫະກອນນຳຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ບ່ອນທີ່ອອກໃບທະບຽນສະຫະກອນ ພາຍໃນເວລາ 15 ວັນ.

**ມາດຕາ 24 ສິດຂອງສະຫະກອນຫັດຖະກຳ**

ນອກຈາກສິດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ, ສະຫະກອນຫັດຖະກຳ ມີສິດ ດັ່ງນີ້:

1. ເຂົ້າເຖິງແຫຼ່ງວັດຖຸດິບ ຫຼື ໂຄຕາ ວັດຖຸດິບ ເພື່ອຕອບສະໜອງ ໃຫ້ແກ່ຂະບວນການຜະລິດ ແລະ ປຸງແຕ່ງ;
2. ໃຫ້ນະໂຍບາຍແກ່ສະມາຊິກຂອງຕົນໃນການເຊົ່າອຸປະກອນ ແລະ ພາຫະນະການຜະລິດ ຕາມລະບຽບຂອງສະຫະກອນກຳນົດ;
3. ເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ;
4. ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວທາງລັດຖະການ;
5. ພົວພັນຮ່ວມມື ກັບອົງການຈັດຕັ້ງຂອງພາກລັດ, ກຸ່ມ ແລະ ສະຫະກອນອື່ນ.

**ມາດຕາ 25 ພັນທະຂອງສະຫະກອນຫັດຖະກຳ**

ນອກຈາກພັນທະ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ, ສະຫະກອນຫັດຖະກຳ ມີພັນທະ ດັ່ງນີ້:

1. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ຂອງສະຫະກອນຫັດຖະກຳ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ທຸກໆ ຫົກ ເດືອນ;
2. ສົ່ງແຜນການຜະລິດປະຈຳປີຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ;
3. ຮັບຜິດຊອບຕໍ່ໜີ້ສິນ ແລະ ຜົນເສຍຫາຍຈາກການດຳເນີນກິດຈະການ ຂອງຕົນ.

**ມາດຕາ 26 ເງື່ອນໄຂຂອງການເປັນສະມາຊິກ**

ສະມາຊິກຂອງສະຫະກອນຫັດຖະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບໍ່ແມ່ນນິຕິບຸກຄົນ;
2. ເປັນພົນລະເມືອງລາວ ມີອາຍຸ ສິບແປດ ປີຂຶ້ນໄປ;
3. ສະໝັກໃຈ ແລະ ຖືຮຸ້ນ ຢ່າງໜ້ອຍ ໜຶ່ງ ຮຸ້ນ;
4. ບໍ່ມີໜີ້ສິນ ຫຼາຍກວ່າຊັບສິນ;
5. ເງື່ອນໄຂອື່ນ ຕາມການກຳນົດຂອງສະຫະກອນ.

**ມາດຕາ 27 ສິດຂອງສະມາຊິກສະຫະກອນຫັດຖະກຳ**

ບອກຈາກສິດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ, ສະມາຊິກສະຫະກອນຫັດຖະກຳ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສະຫວັດດີການຕາມກົດລະບຽບຂອງສະຫະກອນ;

2. ສະເໜີຄວາມເຫັນຕໍ່ຄະນະບໍລິຫານສະຫະກອນຫັດຖະກຳ ກ່ຽວກັບການເຄື່ອນໄຫວຂອງສະຫະກອນຫັດຖະກຳ.

**ມາດຕາ 28 ພັນທະຂອງສະມາຊິກສະຫະກອນຫັດຖະກຳ**

ນອກຈາກພັນທະ ຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ແລ້ວສະມາຊິກສະຫະກອນຫັດຖະກຳ ມີພັນທະ ດັ່ງນີ້:

1. ປະກອບສ່ວນຄົ້ນຄິດ ແລະ ພັດທະນາຜະລິດຕະພັນຂອງສະຫະກອນຫັດຖະກຳ ໃຫ້ຮັບປະກັນໄດ້ທັງຄຸນນະພາບ ແລະ ປະລິມານ ຕາມຄວາມສາມາດຂອງຕົນ;

2. ສົ່ງເສີມ ແລະ ສະໜັບສະໜູນທຸລະກິດ ຂອງສະຫະກອນຫັດຖະກຳ ເພື່ອໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນຄົງ.

3. ຈ່າຍເງິນບຳລຸງ ຕາມລະບຽບຂອງສະຫະກອນຫັດຖະກຳ.

**ມາດຕາ 29 ຊັບສິນ ແລະ ການກວດສອບ ສະຫະກອນ ຫັດຖະກຳ**

ຊັບສິນ ແລະ ການກວດສອບ ສະຫະກອນ ຫັດຖະກຳ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ.

**ມາດຕາ 30 ການຄວບ, ການແຍກ ແລະ ການຍຸບເລີກ ຂອງສະຫະກອນຫັດຖະກຳ**

ການຄວບ, ການແຍກ ແລະ ການຍຸບເລີກ ຂອງສະຫະກອນຫັດຖະກຳ ໃຫ້ປະຕິບັດຕາມຫຼັກການ ທີ່ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ.

ສະຫະກອນຫັດຖະກຳ ທີ່ມີຈຸດປະສົງ ຄວບ, ແຍກ ຫຼື ຍຸບເລີກ ໃຫ້ຍື່ນໜັງສືສະເໜີ ແລະ ເອກະສານກ່ຽວຂ້ອງ ເປັນຕົ້ນ ມະຕິກອງປະຊຸມສະຫະກອນ ແລະ ໃບອະນຸຍາດສ້າງຕັ້ງສະຫະກອນ ເຖິງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອຄົ້ນຄວ້າພິຈາລະນາ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ພາຍຫຼັງການຄວບ, ການແຍກ ຫຼື ການຍຸບເລີກ ສະຫະກອນຫັດຖະກຳ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແຈ້ງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ເພື່ອຊາບ ແລະ ປັບປຸງບັນຊີ.

## ໝວດທີ 5
## ການຄຸ້ມຄອງ ແລະ ການກວດກາ ວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ

**ມາດຕາ 31 ການຄຸ້ມຄອງວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ**

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນກົມອຸດສາຫະກໍາ ແລະ ຫັດຖະກໍາ, ກະຊວງອຸດສາຫະກໍາ ແລະ ການຄ້າ;
2. ຂັ້ນແຂວງ ແມ່ນພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງກົມອຸດສາຫະກໍາ ແລະ ຫັດຖະກໍາ**

ກົມອຸດສາຫະກາ ແລະ ຫັດຖະກາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ ແລະ ແຜນການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງ ວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ;
3. ເຜີຍແຜ່ແນະນໍາ ຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາທີ່ກ່ຽວຂ້ອງກັບວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ;
4. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງການດໍາເນີນກິດຈະການຂອງກຸ່ມ ແລະ ສະຫະກອນ ຫັດຖະກໍາ ໃນຂອບເຂດທົ່ວປະເທດ ຕາມກົດໝາຍ ແລະ ລະບຽບການ;
5. ປະສານສົມທົບກັບ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ໃນການຈັດຕັ້ງປະຕິບັດວຽກງານຂອງກຸ່ມ ແລະ ສະຫະກອນ ຫັດຖະກໍາ;
6. ພົວພັນຮ່ວມມື ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ;
7. ຄົ້ນຄວ້າ, ສະເໜີຍ້ອງຍໍ ຕໍ່ຜູ້ດໍາເນີນທຸລະກິດດ້ານກຸ່ມ ແລະ ສະຫະກອນ ຫັດຖະກໍາ ທີ່ມີຜົນງານດີເດັ່ນ ຕາມການສະເໜີຂະແໜງອຸດສາຫະກາ ແລະ ການຄ້າ ຂັ້ນທ້ອງຖິ່ນ;
8. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີຂອງກຸ່ມ ແລະ ສະຫະກອນຫັດຖະກໍາ;
9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ນະໂຍບາຍ ແລະ ນິຕິກໍາ ກ່ຽວກັບວຽກງານກຸ່ມ ແລະ ສະຫະກອນ ຫັດຖະກໍາ;
2. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງການດໍາເນີນກິດຈະການຂອງກຸ່ມ ແລະ ສະຫະກອນ ຫັດຖະກໍາ ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

3. ແນະນຳ ແລະ ປະສານງານດ້ານວິຊາການ ກັບຂະແໜງການທີ່ກ່ຽວຂ້ອງຂອງແຂວງ, ນະຄອນຫຼວງ ໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະທີ່ກ່ຽວຂ້ອງເພື່ອສົ່ງເສີມກຸ່ມ ແລະ ສະຫະກອນ ຫັດຖະກຳ;

4. ພົວພັນຮ່ວມມື ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກຸ່ມ ແລະ ສະຫະກອນ ຫັດຖະກຳ;

5. ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ທີ່ສ້າງຕັ້ງຢູ່ແຂວງ, ນະຄອນຫຼວງ ຂອງຕົນ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງກຸ່ມ ແລະ ສະຫະກອນຫັດຖະກຳ;

7. ສະເໜີກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອປະຕິບັດນະໂຍບາຍຍ້ອງຍໍ ຕໍ່ຜູ້ດຳເນີນທຸລະກິດກຸ່ມ ແລະ ສະຫະກອນ ຫັດຖະກຳ ທີ່ມີຜົນງານດີເດັ່ນ;

8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ປະຈຳ 6 ເດືອນໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້, ນະໂຍບາຍ ແລະ ນິຕິກຳ ກ່ຽວກັບວຽກງານກຸ່ມ ແລະ ສະຫະກອນ ຫັດຖະກຳ;

2. ສົ່ງເສີມ, ພັດທະນາ ການດຳເນີນກິດຈະການຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ໃນຂອບເຂດເມືອງ, ນະຄອນຂອງຕົນ;

3. ພິຈາລະນາ ອອກ, ໂຈະ ແລະ ຖອນ ໃບອະນຸຍາດສ້າງຕັ້ງກຸ່ມ ແລະ ສະຫະກອນ ຫັດຖະກຳ;

4. ຮັບຮອງແຜນການຜະລິດປະຈຳປີຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ;

5. ໃຫ້ຄຳແນະນຳດ້ານວິຊາການ ແກ່ຫົວໜ່ວຍທຸລະກິດ ແລະ ຜູ້ປະກອບການ ກ່ຽວກັບການສ້າງຕັ້ງ, ການຂໍນະໂຍບາຍຂອງ ກຸ່ມ ແລະ ສະຫະກອນ ຫັດຖະກຳ;

6. ພົວພັນຮ່ວມມື ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກຸ່ມ ແລະ ສະຫະກອນ ຫັດຖະກຳ;

7. ຊຸກຍູ້, ຕິດຕາມ ແລະ ກວດກາ ການດຳເນີນກິດຈະການຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ທີ່ຕັ້ງຢູ່ ພາຍໃນເມືອງ, ນະຄອນ ຂອງຕົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງກຸ່ມ ແລະ ສະຫະກອນຫັດຖະກຳ;

9. ສະເໜີຂັ້ນເທິງພິຈາລະນາຍ້ອງຍໍ ຕໍ່ຜູ້ດຳເນີນທຸລະກິດກຸ່ມ ແລະ ສະຫະກອນ ຫັດຖະກຳ ທີ່ມີຜົນງານດີເດັ່ນ ຕາມລະບຽບການ;

10. ສະເໜີບຳລຸງ ແລະ ພັດທະນາບຸກຄະລະກອນ ທີ່ຮັບຜິດຊອບວຽກງານກຸ່ມ ແລະ ສະຫະກອນ ຫັດຖະກຳ;

11. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ ປະຈຳ ສາມເດືອນ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 35 ເນື້ອໃນການກວດກາ**

ເນື້ອໃນຂອງການກວດກາກຸ່ມ ແລະ ສະຫະກອນ ຫັດຖະກຳ ປະກອບດ້ວຍ:

1. ກວດກາຄະນະບໍລິຫານ, ນາຍບັນຊີ, ຜູ້ຈັດການ ແລະ ພະນັກງານວິຊາການ ທີ່ປະຕິບັດຜິດກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ;

2. ກວດກາລະບົບການຜະລິດ, ການເຄື່ອນໄຫວ ແລະ ສິ່ງແວດລ້ອມ ຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ;

3. ກວດກາ, ຕິດຕາມການເຄື່ອນໄຫວວຽກງານດ້ານການເງິນ, ການບັນຊີ, ການນຳໃຊ້ທຶນ ແລະ ຊັບສິນບັດ ຂອງສະຫະກອນ ຫັດຖະກຳ;

4. ກວດກາກິດຈະກຳອື່ນ ໃນການດຳເນີນທຸລະກິດຂອງກຸ່ມ ແລະ ສະຫະກອນ ຫັດຖະກຳ.

**ມາດຕາ 36 ຮູບການ ການກວດກາ**

ການກວດກາກຸ່ມ ແລະ ສະຫະກອນ ຫັດຖະກຳ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການປະຈຳປີ ໂດຍກວດກາຕາມຂັ້ນຕອນ ແລະ ມີກຳນົດເວລາອັນແນ່ນອນ.

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການປົກກະຕິ, ກ່ອນລົງກວດກາແຕ່ລະຄັ້ງ ຕ້ອງແຈ້ງໃຫ້ເປົ້າໝາຍທີ່ຈະລົງກວດກາຮັບຊາບກ່ອນລ່ວງໜ້າຢ່າງໜ້ອຍ ສາມ ວັນລັດຖະການ.

3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ແລະ ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ ເປັນຕົ້ນ ເກີດອຸປະຕິເຫດແຮງງານ, ມີຜົນເສຍຫາຍຮ້າຍແຮງຕໍ່ຊີວິດ ແລະ ຊັບສິນ.

ການກວດກາ ແຕ່ລະຄັ້ງຕ້ອງເຮັດບົດບັນທຶກ ແລະ ປະຕິບັດຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 37 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 38 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນປະກາດໃຊ້ ສິບຫ້າວັນ.

ສຳລັບກຸ່ມ ແລະ ສະຫະກອນ ຫັດຖະກຳ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ກ່ອນຂໍ້ຕົກລົງສະບັບນີ້ ໃຫ້ແຈ້ງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເພື່ອປັບປຸງໃຫ້ໄດ້ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ